ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 00000 =====

ກະຊວງສຶກສາທິການ ແລະ ກີລາ

ເລກທີ 1313 /ສທ
ນະຄອນຫຼວງວຽງຈັນ, ວັນທີ 28 JUN 2013

ຂໍ້ຕົກລົງຂອງລັດຖະມົນຕີ
ວ່າດ້ວຍ ການອະນຸມັດໃຫ້ນຳໃຊ້ຫຼັກສູດ ຊັ້ນສູງ ຄຸພະລະສຶກສາ ລະບົບ 12+2 (ສະບັບປັບປຸງ)

- ອີງຕາມ: ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 282/ນຍ ລົງວັນທີ 07 ກັນຍາ 2011 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກີລາ
- ອີງຕາມ: ການຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກີລາ ສະບັບເລກທີ 3969/ສສກ.ຈຕ ລົງວັນທີ 16/10/2012 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ວິທະຍາໄລ ພະລະສຶກສາ
- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 1487 ລົງວັນທີ 22/4/2013 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຄູ[illegible]ຫຼັກສູດຊັ້ນສູງ ລະບົບ 11+3 ; 11+4 ແລະ 12+2 ຂອງ ວິທະຍາໄລພະລະສຶກສາ ສົກປີ 2013
- ອີງຕາມ: ການຄົ້ນຄວ້າ ສະເໜີຂອງກົມພະລະ ແລະ ສິລະປະສຶກສາ ແລະ ວິທະຍາໄລພະລະສຶກສາ

ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກີລາ ຈຶ່ງຕົກລົງ:

ມາດຕາ 01: ອະນຸມັດໃຫ້ ວິທະຍາໄລພະລະສຶກສາ ນຳໃຊ້ຫຼັກສູດ ຊັ້ນສູງ ຄຸພະລະສຶກສາ ລະບົບ 12+2 (ສະບັບປັບປຸງ).

ມາດຕາ 02: ພາຍຫຼັງຮຽນຈົບຫຼັກສູດດັ່ງກ່າວຜູ້ຮຽນຈະໄດ້ຮັບປະກາສະນີຍະບັດຊັ້ນສູງ ຄຸພະລະສຶກສາ.ໄດ້ຮັບຊັ້ນ/ຂັ້ນເງິນເດືອນຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 177/ລບ. ວ່າດ້ວຍລະບຽບລັດຖະກອນ.

ມາດຕາ 03: ໃຫ້ວິທະຍາໄລພະລະສຶກສາ ດຳເນີນການສິດສອນຕາມຫຼັກສູດ ແຕ່ລະຂັ້ນຕອນ ແລະປະເມີນຜົນແຕ່ລະໄລຍະ ພ້ອມທັງອອກປະກາສະນີຍະບັດ ໃຫ້ຜູ້ທີ່ຮຽນຈົບຫຼັກສູດດັ່ງກ່າວ ຕາມລະບຽບຫຼັກການ.

ມາດຕາ 04: ໃຫ້ກົມການກະຊວງສຶກສາທິການ ແລະ ກີລາ, ກົມບັດຕັ້ງ ແລະ ພະນັກງານ, ກົມພະລະ ແລະ ສິລະປະສຶກສາ, ກົມສ້າງຄູ, ກົມການສຶກສາຊັ້ນສູງ, ກົມອາຊີວະສຶກສາ, ສູນປະກັນຄຸນນະພາບການສຶກສາ, ວິທະຍາໄລພະລະສຶກສາ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງໃຜລາວ.

ມາດຕາ 05: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ບ່ອນສົ່ງ:
- ຕ້ອງການກະຊວງສຶກສາທິການ ແລະ ກີລາ 1 ສະບັບ
- ກົມບັດຕັ້ງ ແລະ ພະນັກງານ 1 ສະບັບ
- ກົມພະລະ ແລະ ສິລະປະສຶກສາ 1 ສະບັບ
- ກົມສ້າງຄູ 1 ສະບັບ
- ກົມການສຶກສາຊັ້ນສູງ 1 ສະບັບ
- ກົມອາຊີວະສຶກສາ 1 ສະບັບ
- ສູນປະກັນຄຸນນະພາບການສຶກສາ 1 ສະບັບ
- ວິທະຍາໄລພະລະສຶກສາ 1 ສະບັບ

ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກີລາ

ຮສ.ດຣ.ກອງສີ ແສງມະນີ